ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ມະຫາວິທະຍາໄລສຸພານຸວົງ

ເລກທີ.331../ມສ

ຫຼວງພະບາງ, ວັນທີ 28.10.2021

## ແຈ້ງການ

**ຮຽນ/ເຖິງ :** ຫົວໜ້າພະແນກສຶກສາທິການ ແລະ ກິລາ ປະຈຳແຂວງພາກເໜືອ, ຄະນະບໍດີ, ຫົວໜ້າຫ້ອງການ, ຜູ້ອຳນວຍການສູນ, ອາຈານ, ພະນັກງານ, ນັກຮຽນທີ່ຈົບມັດທະຍົມຕອນປາຍ ຕະຫຼອດຮອດພໍ່ແມ່ຜູ້ປົກຄອງນັກຮຽນ.

**ເລື່ອງ :** ການສອບເສັງຄັດເລືອກນັກສຶກສາເຂົ້າຮຽນ ຫຼັກສູດລະດັບປະລິນຍາຕີ ໃນຮູບແບບທາງໄກ ຫຼື ລະບົບອອນລາຍ (Online) ຢູ່ທີ່ມະຫາວິທະຍາໄລສຸພານຸວົງ ປະຈຳສົກສຶກສາ 2021-2022.

ຄະນະກຳມະການຈັດຕັ້ງການສອບເສັງ ປະຈຳມະຫາວິທະຍາໄລສຸພານຸວົງ, ຂໍຖືເປັນກຽດແຈ້ງມາຍັງທ່ານກ່ຽວກັບການສອບເສັງເຂົ້າຮຽນລະດັບປະລິນຍາຕີ ດ້ວຍລະບົບອອນລາຍ (Online) ຢູ່ທີ່ມະຫາວິທະຍາໄລສຸພານຸວົງ ໃນສົກສຶກສາ 2021-2022, ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

1. **ການຈັດຕັ້ງການສອບເສັງ:**

ມະຫາວິທະຍາໄລສຸພານຸວົງ ເປັນເຈົ້າການໃນການຈັດຕັ້ງການສອບເສັງ ແລະ ຄັດເລືອກເອົານັກສຶກສາເຂົ້າຮຽນທີ່ມະຫາວິທະຍາໄລສຸພານຸວົງ.

2. **ສະຖານທີ່ຄວບຄຸມການສອບເສັງ:**

ສູນສອບເສັງມະຫາວິທະຍາໄລສຸພານຸວົງ (ຕຶກວິທະຍາສາດ) ວິທະຍາເຂດບ້ານດອນໃໝ່, ທີ່ນະຄອນຫຼວງພະບາງ, ແຂວງຫຼວງພະບາງ.

3. **ເງື່ອນໄຂຜູ້ເຂົ້າສອບເສັງ:**

- ແມ່ນຜູ້ທີ່ໄດ້ຜ່ານການລົງທະບຽນສະໝັກເຂົ້າສອບເສັງຜ່ານຊ່ອງທາງອອນລາຍ ແລະ ລົງທະບຽນແບບເຊິ່ງໜ້າ (ຣວມທັງຜູ້ທີ່ໄດ້ຮັບບັດ ຫຼື ບໍ່ໄດ້ຮັບບັດເຂົ້າຫ້ອງສອບເສັງເທື່ອ) ນັບແຕ່ວັນທີ 17/8-24/09/2021 ເປັນຕົ້ນມາ
- ຜູ້ທີ່ສະໝັກເຂົ້າສອບເສັງຕ້ອງສຳເລັດການຈ່າຍເງິນຄ່າບໍລິການສອບເສັງ 40,000 ກີບຕໍ່ 1 ຄົນ (ຖ້າຫາກບໍ່ໄດ້ຊຳລະການຈ່າຍເງິນ ແມ່ນບໍ່ສາມາດອອກບັດ ແລະ ໃຫ້ User ໃນການສອບເສັງຄັ້ງນີ້ໄດ້)
- ການຈ່າຍຄ່າບໍລິການສອບເສັງ ແມ່ນຈ່າຍຜ່ານລະບົບບັນຊີຂອງ ມະຫາວິທະຍາໄລສຸພານຸວົງ (ລະຫັດບັນຊີ 056-12-00-01129543-001 ຊື່ບັນຊີ KOLAKAN SIMOUNDA ຫຼື ຜ່ານລະບົບ QR Code).

QR code ຈ່າຍບໍລິການສອບເສັງ

ການໂອນເງິນຄ່າບໍລິການສອບເສັງໄດ້ໃນໂມງລັດຖະການ (ຈັນ ເຖິງ ສຸກ) ເລີ່ມແຕ່ 8 ໂມງເຊົ້າ ຫາ 4 ໂມງແລງ. ຜູ້ສະໝັກສອບເສັງຕ້ອງໄດ້ຂຽນ ຊື່ ແລະ ນາມສະກຸນຂອງຕົນເອງລົງໃສ່ຢູ່ໃນຫ້ອງຄຳອະທິບາຍຂອງ

ການໂອນເງິນ ເພາະວ່າຄະນະກຳມະການຮັບຜິດຊອບຈະໄດ້ກວດກາລາຍຊື່ຂອງຜູ້ສະໝັກ.

- ຜູ້ສະໝັກຕ້ອງໄດ້ສົ່ງເອກະສານທີ່ກ່ຽວຂ້ອງ ໃຫ້ຄະນະຮັບຜິດຊອບການສອບເສັງ ຢູ່ທີ່ມະຫາວິທະຍາໄລສຸພານຸວົງ ກ່ອນມື້ສອບເສັງ ຄື:

  1. ນັກຮຽນທີ່ຮຽນຈົບ ມ.ປາຍຜ່ານມາແລ້ວ ຕ້ອງໄດ້ສະແກນປະກາສະນີຍະບັດຈົບຊັ້ນ ມ.ປາຍສະບັບແທ້ ຫຼື ຊົ່ວຄາວ

  2. ນັກຮຽນທີ່ຮຽນຈົບ ມ.ປາຍໃນສົກຮຽນ 2020-2021 ຖ້າບໍ່ທັນໄດ້ຮັບປະກາສະນີຍະບັດຈົບ ມ.ປາຍ ໃຫ້ສະແກນບັດເຂົ້າຫ້ອງສອບເສັງຈົບຊັ້ນ ມ.ປາຍ ຂອງຕົນເອງ

  3. ຕ້ອງໄດ້ສະແກນຮູບຖ່າຍ 3x4cm ຈຳນວນ 1 ໃບ (ຮູບຖ່າຍຕິດປະກາສະນີຍະບັດ ຊັ້ນມັດທະຍົມປາຍ)

- ເພື່ອຢັ້ງຢືນວ່າຜູ້ສະມັກສອບເສັງໄດ້ລົງທະບຽນສຳເລັດ ແມ່ນຈະໄດ້ຮັບລະຫັດ User ຈາກຄະນະກຳມະການຈັດການສອບເສັງຮວມທັງບົດແນະນຳວິທີເຂົ້າຮ່ວມການສອບເສັງ.
- ຜູ້ສະໝັກສອບເສັງ ຕ້ອງກະກຽມອຸປະກອນໃນການສອບເສັງຄື: Smart mobile (ໂທລະສັບມືຖືທີ່ສາມາດໃຊ້ເຊື່ອມກັບອິນເຕີເນັດໄດ້) ຫຼື ຄອມພິວເຕີທີ່ມີກ້ອງ ເພື່ອສາມາດຕິດຕາມ ແລະ ບັນທຶກໃນເວລາສອບເສັງ
- ສາມາດສອບເສັງໃນສະຖານທີ່ຕ່າງໆໄດ້ດ້ວຍຄວາມເໝາະສົມ ໂດຍສະເພາະມີຫ້ອງສອບເສັງທີ່ເປັນລັກສະນະສ່ວນຕົວລວມທັງມີລະບົບອິນເຕີເນັດທີ່ມີຄວາມໄວສູງເພື່ອສາມາດໃຊ້ໃນການສອບເສັງແບບອອນລາຍ
- ຜູ້ສະໝັກສອບເສັງຕ້ອງປະຕິບັດຕາມຂັ້ນຕອນ ແລະ ກົດລະບຽບ ຂອງຄະນະກຳມະການແຈ້ງອອກຢ່າງເຂັ້ມງວດ.

**4. ວັນ ແລະ ເວລາສອບເສັງຄັດເລືອກນັກສຶກສາ**

- ຄະນະກຳມະການຈັດການສອບເສັງໄດ້ຈັດເປັນກຸ່ມ ຫຼື ຫ້ອງທີ່ມີຈຳນວນ 50 ຄົນຕໍ່ກຸ່ມ ຫຼື ຫ້ອງເສັງໃນເວລາດຽວກັນຕາມທີ່ມະຫາວິທະຍາໄລສຸພານຸວົງ ໄດ້ກຳນົດໃຫ້ແຕ່ລະຄົນເທົ່ານັ້ນ, ເຊິ່ງບໍ່ສາມາດປ່ຽນແປງເວລາໄດ້. (ສຳລັບວັນສອບເສັງແມ່ນ ຢູ່ລະຫວ່າງ **<u>ວັນທີ 15-17 ພະຈິກ 2021 ນີ້</u>**).

**5. ວິຊາສອບເສັງ ແລະ ກຸ່ມສອບເສັງ**

1. ກຸ່ມສອບເສັງໃນສາຍ A (STEM)
   1) ຄະນິດສາດ A + ຟີຊິກສາດ — ໃຊ້ເວລາ 90 ນາທີ
   2) ເຄມີສາດ+ຊີວະສາດ+ພາສາລາວ-ວັນນະຄະດີ+ພາສາອັງກິດ — ໃຊ້ເວລາ 60 ນາທີ
2. ກຸ່ມສອບເສັງໃນສາຍ B (NON STEM)
   1) ຄະນິດສາດ B + ພາສາລາວ-ວັນນະຄະດີ — ໃຊ້ເວລາ 90 ນາທີ
   2) ພູມສາດ+ປະຫວັດສາດ+ພາສາອັງກິດ — ໃຊ້ເວລາ 60 ນາທີ

ໝາຍເຫດ: ຖ້າກໍລະນີມີບັນຫາ ກະລຸນາຕິດຕໍ່ສອບຖາມຕາມເບີໂທ ແລະ ແຟັກທີ່ແຈ້ງໄວ້ເບື້ອງລຸ່ມນີ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ຂໍຄວາມຮ່ວມມືຈາກບັນດາທ່ານຈົ່ງຊ່ວຍແຈ້ງໃຫ້ນັກຮຽນທີ່ຮຽນຈົບມັດທະຍົມຕອນປາຍ ຫຼື ທຽບເທົ່າ ແລະ ຜູ້ປົກຄອງນັກຮຽນຮັບຊາບໂດຍທົ່ວເຖິງກັນດ້ວຍ.

**ອະທິການບໍດີ**

ຮສ.ປທ. ວິໄຊ ຈັນສະຫວ່າງ